ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ,

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********************

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0109 /ກປ.05

ນະຄອນຫຼວງວຽງຈັນ , ວັນທີ 20 APR 2005

ເຖິງ : ທ່ານຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ເຂດພິເສດ.

ເລື້ອງ : ການສົ່ງໄມ້ ເຄິ່ງສຳເລັດຮູບ ອອກຕ່າງປະເທດ.

- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 25/ນຍ, ລົງວັນທີ 15/10/2004 ວ່າດ້ວຍ ການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0163/ກປ. 04, ລົງວັນທີ 07/06/2004 ວ່າດ້ວຍ ໄມ້ເລື່ອຍ,ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ.

ປະຕິບັດຕາມທິດຊີ້ນຳຂອງຂັ້ນເທິງ ແລະ ພ້ອມດຽວກັນນີ້ ກໍເພື່ອປ່ຽນແທນ ຂໍ້ຕົກລົງ ສະບັບເລກທີ 0414/ກປ, ລົງວັນທີ12/05/1995 ທີ່ບໍ່ສອດຄ່ອງກັບສະພາບຄວາມເປັນຈິງ , ກະຊວງກະສິກຳ ແລະ ປ່າໄມ້ ໄດ້ປະກາດໃຊ້ ຂໍ້ຕົກລົງ ສະບັບເລກທີ 0163/ກປ.04, ລົງວັນທີ 07/06/2004 ວ່າດ້ວຍ ໄມ້ເລື່ອຍ, ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ ຊຶ່ງຢູ່ ໝວດທີ III , ມາດຕາ 6 ໄດ້ກຳນົດນະໂຍບາຍ ກ່ຽວກັບ ການສົ່ງໄມ້ເຄິ່ງສຳເລັດຮູບທຸກຊະນິດ ອອກຕ່າງປະເທດ. ແຕ່ມາຮອດທ້າຍປີ 2004 ລັດຖະບານ ໄດ້ປະກາດໃຊ້ ຄຳສັ່ງເລກທີ 25/ນຍ, ລົງວັນທີ15/ 10/ 2004 ວ່າດ້ວຍ ການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້. ແຕ່ມາຮອດປະຈຸບັນ ຍັງ ມີບາງແຂວງ ສືບຕໍ່ ສົ່ງໄມ້ເຄິ່ງສຳເລັດຮູບທຸກຊະນິດ ອອກຕ່າງປະເທດ ແລະ ໃຫ້ເຫດຜົນວ່າ ໄມ້ເຄິ່ງສຳເລັດຮູບ ທຸກຊະນິດ ລັດຖະບານ ຍັງອະນຸຍາດໃຫ້ສົ່ງອອກຕ່າງປະເທດ. ສະນັ້ນ ເພື່ອປ້ອງກັນການສວຍໂອກາດ ສົ່ງໄມ້ເຄິ່ງສຳເລັດຮູບ ທີ່ຄຳສັ່ງ ຂອງລັດຖະບານ ໄດ້ເກືອດຫ້າມແລ້ວ ອອກຕ່າງປະເທດ.

ກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການດັ່ງນີ້ :

1./ ການອະນຸຍາດ ໃຫ້ສົ່ງໄມ້ອອກຕ່າງປະເທດ ໃຫ້ປະຕິບັດ ຕາມເນື້ອໃນຈິດໃຈ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 25/ນຍ, ລົງວັນທີ 15/10/2004 ຄື : ອະນຸຍາດໃຫ້ສົ່ງອອກຕ່າງປະເທດ, ໄມ້ສຳເລັດຮູບທຸກຊະນິດ ແລະ ສະເພາະ ໄມ້ເຄິ່ງສຳເລັດຮູບ ອະນຸຍາດໃຫ້ສົ່ງອອກຕ່າງປະເທດ ໄດ້ສະເພາະແຕ່ໄມ້ປອກ, ໄມ້ຝານ, ໄມ້ບົດ ແລະ ຝຸ່ນເຈ້ຍ ເທົ່ານັ້ນ.

2./ ການຄົ້ນຄວ້າພິຈາລະນາ ແລະ ອະນຸຍາດ ໃຫ້ສົ່ງອອກຕ່າງປະເທດ ຕາມພາລະບົດບາດແລ້ວ ແມ່ນ ໜ້າທີ່ ຂອງຂະແໜງການຄ້າ. ສຳລັບ ຂະແໜງການອື່ນ ໂດຍສະເພາະ ແມ່ນ ຂະແໜງການ ກະສິກຳ ແລະ ປ່າໄມ້ ມີໜ້າທີ່ ເບິ່ງຄືນ ກ່ຽວກັບ ທີ່ມາຂອງໄມ້ ແລະ ຂະໜາດມາດຕະຖານໄມ້ ຕາມ ຂໍ້ຕົກລົງ ສະບັບເລກທີ 0163/ກປ.04, ລົງວັນທີ 7/06/2004.

ດັ່ງນັ້ນ , ຈຶ່ງແຈ້ງມາໃຫ້ ຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້

ສີຕາເຮັ່ງ ຣາຊະພົນ

<u>ບ່ອນນຳສົ່ງ:</u>

- ກົມປ່າໄມ້ ( ເພື່ອຕິດຕາມ )
- ເກັບມ້ຽນ